**ມິຊຊາອາທິດທີ 16 ກຳນົດທຳມະດາ**

**ວັນທີ 17 ກໍລະກົດ 2022**



**ພຣະວໍລະສານໂດຍນັກບຸນລູກາ 10, 38-42**

ໃນເວລານັ້ນ, ເມື່ອພຣະເຢຊູເຈົ້າສະເດັດເຂົ້າໃນບ້ານແຫ່ງໜຶ່ງ, ກໍມີຍິງຜູ້ໜຶ່ງຊື່ມັກທາໄດ້ຕ້ອນຮັບພຣະອົງຢູ່ເຮືອນຂອງຕົນ. ນາງມັກທາມີນ້ອງສາວຜູ້ໜຶ່ງຊື່ມາຣີອານັ່ງຢູ່ແທບພຣະບາດຂອງພຣະອົງເພື່ອຟັງພຣະວາຈາ.

ນາງມັກທາກັງວົນໃຈໃນການຕ້ອນຮັບຫລາຍ, ຈຶ່ງທູນພຣະອົງວ່າ: ພຣະອາຈານເອີຍ, ພຣະອົງບໍ່ເຫັນໃຈຂ້ານ້ອຍບໍ? ນ້ອງສາວຂ້ານ້ອຍປະໃຫ້ຂ້ານ້ອຍເຮັດວຽກຜູ້ດຽວ, ຂໍບອກນ້ອງມາຊ່ວຍຂ້ານ້ອຍແດ່.

ພຣະອົງກ່າວຕອບວ່າ: ມັກທາ, ມັກທາເອີຍ. ເຈົ້າກັງວົນສົນໃຈຫຍັງນຳຫລາຍສິ່ງຫລາຍຢ່າງແທ້. ສິ່ງຈຳເປັນແທ້ມີແຕ່ອັນດຽວ. ນາງມາຣີອາໄດ້ເລືອກເອົາສິ່ງທີ່ດີເລີດໄປແລ້ວ, ແລະບໍ່ມີໃຜຍາດເອົາໄປໄດ້ເລີຍ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວາຈາພຣະເຈົ້າໃນບົດອ່ານທີໜຶ່ງແລະໃນພຣະວໍລະສານວັນນີ້ມີຈຸດຄ້າຍຄືກັນຈຸດໜຶ່ງທີ່ກ່າວເຖິງຫົວຂໍ້ຂອງການຕ້ອນຮັບແຂກເດີນທາງເຂົ້າມາໃນບ້ານເຮືອນຂອງຕົນ.

ໃນບົດອ່ານທີໜຶ່ງ, ອາບຣາຮາມໄດ້ຕ້ອນຮັບແຂກເດີນທາງສາມຄົນທີ່ຜ່ານໜ້າຕູບຜາມຂອງທ່ານເມື່ອຍາມແດດຮ້ອນ. ທ່ານໄດ້ຕ້ອນຮັບພວກເຂົາແລະໄດ້ບອກໃຫ້ນາງຊາຣາຜູ້ເປັນພັນລະຍາຕຽມເຂົ້າປາອາຫານເພື່ອລ້ຽງເກືອແຂກຜູ້ມາຢ້ຽມຢາມ. ສ່ວນໃນພຣະວໍລະສານວັນນີ້ແມ່ນນາງມາກທາໄດ້ຕ້ອນຮັບພຣະເຢຊູເຈົ້າເຂົ້າມາໃນເຮືອນຂອງນາງ. ແຕ່ສິ່ງທີ່ແຕກຕ່າງລະຫວ່າງນາງມາກທາກັບອາບຣາຮາມຄື: ນາງມາກທາບໍ່ໄດ້ຢູ່ໂອ້ລົມສົນທະນາກັບພຣະເຢຊູເຈົ້າ. ສ່ວນອາບຣາຮາມ, ທ່ານໄດ້ຢູ່ໂອ້ລົມສົນທະນາກັບແຂກສາມຄົນທີ່ມາຢ້ຽມຢາມທ່ານ. ທັດສະນະທ່າທີຂອງອາບຣາຮາມໃນບົດອ່ານທີໜຶ່ງມີຄວາມຄ້າຍຄືກັບມາຣີອາໃນພຣະວໍລະສານ. ເພາະມາຣີອາໄດ້ນັ່ງໃກ້ພຣະເຢຊູເຈົ້າເພື່ອສົນທະນາແລະຟັງວາຈາຂອງພຣະອົງ. ສ່ວນນາງມາກທາ ເຖິງວ່ານາງໄດ້ຮັບພຣະເຢຊູເຈົ້າເຂົ້າມາໃນເຮືອນຂອງນາງ, ແຕ່ນາງມົວເມົາແຕ່ນຳການຕຽມອາຫານເພື່ອຕ້ອນຮັບພຣະອົງ. ສິ່ງນີ້ທຳໃຫ້ນາງມາກທາຂາດໂອກາດທີ່ຈະຢູ່ໃກ້ຊິດກັບພຣະອົງແລະຟັງວາຈາຂອງພຣະອົງ.

ທັດສະນະທ່າທີຂອງນາງມາກທາວັນນີ້ອາດສະທ້ອນໃຫ້ພວກເຮົາເຫັນເຖິງທັດສະນະທ່າທີຂອງພວກເຮົາແຕ່ລະຄົນເຊັ່ນດຽວກັນ. ເພາະຫລາຍຄັ້ງ, ເມື່ອພວກເຮົາຮັບເອົາພຣະເຢຊູເຈົ້າເຂົ້າມາໃນຈິດໃຈພວກເຮົາຜ່ານທາງສິນມະຫາສະໜິດ, ແທນທີ່ພວກເຮົາຈະໃຊ້ເວລາເພື່ອໂອ້ລົມສົນທະນາແລະຟັງສຽງຂອງພຣະອົງ, ພວກເຮົາພັດປະປ່ອຍໃຫ້ຄວາມສົນລະວົນວຸ້ນວາຍກ່ຽວກັບເລື່ອງຢູ່ເລື່ອງກິນໃນຊີວິດເຂົ້າມາທຳໃຫ້ພວກເຮົາຂາດໂອກາດເພື່ອຄິດຫາພຣະເຈົ້າແລະຟັງວາຈາຂອງພຣະອົງ. ດ້ວຍເຫດນີ້, ພຣະເຢຊູເຈົ້າຈຶ່ງກ່າວກັບນາງມາກທາກໍຄືກັບພວກເຮົາແຕ່ລະຄົນວັນນີ້ວ່າ: ມີແຕ່ສິ່ງດຽວທີ່ສຳຄັນທີ່ສຸດກໍຄື ການໄດ້ຢູ່ໃກ້ຊິດກັບພຣະອົງເພື່ອຟັງວາຈາຂອງພຣະອົງ. ແລະສິ່ງນີ້ແມ່ນມາຣີອາໄດ້ກະທຳແລ້ວ. ແລະນາງໄດ້ຮັບສິ່ງທີ່ປະເສີດທີ່ສຸດແລ້ວ. ຖ້າພວກເຮົາຢາກໄດ້ຮັບສິ່ງປະເສີດນີ້ເໝືອນກັບມາຣີອາ ໃຫ້ພວກເຮົາຫຍັບເຂົ້າໃກ້ກັບພຣະເຢຊູເຈົ້າຫລາຍຂຶ້ນໃນຊີວິດຂອງພວກເຮົາ ເພື່ອຈະໄດ້ຮັບຟັງວາຈາຊົງຊີວິດທີ່ມາຈາກພຣະອົງ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ຮູ້ຈັກເລືອກເອົາສິ່ງທີ່ດີທີ່ສຸດເໝືອນກັບມາຣີອາໃນພຣະວໍລະສານວັນນີ້. ເພື່ອລູກຈະໄດ້ໃກ້ຊິດກັບພຣະອົງຫລາຍຂຶ້ນແລະເຊື່ອຟັງວາຈາຂອງພຣະອົງຫລາຍຂຶ້ນໃນຊີວິດຂອງລູກ. ເພື່ອລູກຈະໄດ້ຮູ້ຈັກພຣະອົງຫລາຍຂຶ້ນແລະຮັກພຣະອົງຫລາຍຂຶ້ນເຊັ່ນດຽວກັນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ